# ມາດຕະຖານລະຫັດຂໍ້ມູນ Tracking

ແມ່ນການກຳນົດຄຸນລັກສະນະສະເພາະຂອງລະຫັດຂໍ້ມູນ ເພື່ອໃຫ້ສາມາດຕິດຕາມສະຖານະຂອງເຄື່ອງຝາກ ແລະ ຫໍ່ເຄື່ອງໄດ້ຢ່າງຖືກຕ້ອງ, ມີຄວາມວ່ອງໄວ, ຊັດເຈນ ແລະ ຄວາມປອດໄພ ໃນການແລກປ່ຽນ ແລະ ເຊື່ອມໂຍງຂໍ້ມູນ ລະຫວ່າງ ຜູ້ປະກອບການທີ່ເປັນສະມາຊິກຂອງຕາໜ່າງໄປສະນີແຫ່ງຊາດ ແນໃສ່ຍົກລະດັບການບໍລິການໃຫ້ມີປະສິດທິພາບ ແລະ ຄຸນນະພາບທີ່ດີ.

## 1. ການກຳນົດລະຫັດເຄື່ອງຝາກ (Identification of postal items-PID)[1]

### (1). ຈຸດປະສົງ:

ມາດຕະຖານນີ້ກຳນົດຂຶ້ນ ເພື່ອນຳໄປໃຊ້ລະບຸສິ່ງຂອງພາຍໃນບໍລິສັດ ແລະ ລະຫວ່າງຜູ້ປະກອບການ ພາຍໃຕ້ຂໍ້ຕົກລົງຮ່ວມກັນລະຫວ່າງສອງ ຫຼື ຫຼາຍຝ່າຍ ເພື່ອຕອບສະໜອງກັບຄວາມຕ້ອງການໃນການເປີດກວ້າງບໍລິການແຈກຢາຍ, ຊຶ່ງຕ້ອງນຳໄປໃຊ້ຈຳແນກລາຍການເຄື່ອງຝາກແຕ່ລະໂຕ ໂດຍລະຫັດດັ່ງກ່າວຈະພິມໃສ່ລາຍການເຄື່ອງ ຫຼື ສັນຍາລັກ ຫຼື ແບບຟອມ ທີ່ຕິດໃສ່ເຄື່ອງຝາກ.

ໂຄງສ້າງລະຫັດຂອງເຄື່ອງຝາກໄປສະນີປະກອບມີ 14 ຕົວອັກສອນ ແບ່ງອອກເປັນ 4 ກຸ່ມ ດັ່ງນີ້:

PID = aa-nnnnnnnn-n-aaa

**ຄວາມໝາຍຂອງແຕ່ລະກຸ່ມ**

| Character No | Data format | Component |
|---|---|---|
| 1 and 2 | a2 | Service indicator (see 5.2 and 5.6) |
| 3 to 10 | n8 | Serial number (see 5.3) |
| 11 | n1 | Check digit (see 5.4) |
| 12 and 13 | A3 | Company code (see 5.5) |

- **ຕົວບົ່ງຊີ້ການບໍລິການ (Service indicator):**

  ມີໄວ້ສຳລັບໃຊ້ງານທົ່ວໄປລະຫວ່າງຜູ້ປະກອບການ ຊຶ່ງໂຕອັກສອນທຳອິດໃຊ້ລະບຸປະເພດຂອງຜະລິດຕະພັນ ຫຼື ບໍລິການໄປສະນີ ແລະ ຕົວອັກສອນທີ່ສອງ ກຳນົດໂດຍຜູ້ປະກອບການຕົ້ນທາງທີ່ໄດ້ຮັບອະນຸຍາດໃຫ້ນຳໃຊ້ຈາກກົມໄປສະນີ ໃນຕາຕະລາງກຳນົດ Service indicator ເຊັ່ນ:

  E - ບໍລິການໄປສະນີດ່ວນພິເສດ (ລວມມີ L ແລະ C)
  L - ບໍລິການໄປສະນີພັນ
  C - ບໍລິການພັດສະດຸໄປສະນີ

  **ຕົວຢ່າງ LA ຫຼື RA**
  **LA** - ບໍລິການໄປສະນີພັນທີ່ສາມາດ Tracking ໄດ້ (Letter post tracked)
  **RA** - ບໍລິການໄປສະນີພັນລົງທະບຽນ (Letter post registered)

- **ຈຳນວນເລກລຳດັບ (Serial number):**

---

[1] S10 ຂອງສະຫະພາບໄປສະນີສາກົນ

ແມ່ນໝາຍເລກປະຈຳເຄື່ອງ ຕ້ອງມີຄວາມຍາວແປດຫຼັກ ໃນກໍລະນີທີ່ຈຳເປັນເພື່ອໃຫ້ແນ່ໃຈວ່າມີຄວາມຍາວແປດຫຼັກນຳໜ້າໃຫ້ໃສ່ເລກ 0 ນຳໜ້າ, ດັ່ງນັ້ນ ຄ່າໃດໆໃນຊ່ວງ 00000000 ຫາ 99999999 ຈຶ່ງເປັນໝາຍເລກທີ່ຖືກຕ້ອງ.

- **ໂຕເລກກວດສອບ (Check digit):**

1 ຕົວອັກສອນຖັດມາ (N11) ໝາຍເຖິງ ຕົວເລກເພື່ອໄວ້ກວດສອບຄວາມຖືກຕ້ອງຂອງການໃຫ້ລະຫັດຂອງການກຳນົດຕົວເລກໃນກຸ່ມ ສອງ (CHECK DIGIT) ຊຶ່ງມີຮູບແບບການຄຳນວນຕາມສູດດັ່ງນີ້:

- ຂັ້ນຕອນທີ **1** ຄູນຄ່າຂອງຕົວເລກ ໃນລຳດັບຂອງລະຫັດ ດ້ວຍຕົວແປ **8 6 4 2 3 5 9 7**
- ຂັ້ນຕອນທີ **2** ບວກຜົນໄດ້ຮັບຂອງຄ່າຕົວແປທີ່ໄດ້ ຂອງແຕ່ລະຕົວອັກສອນ
- ຂັ້ນຕອນທີ **3** ນຳຜົນໄດ້ຮັບມາຫານດ້ວຍ **11** ແລ້ວເກັບເອົາຕົວເສດໄວ້
- ຂັ້ນຕອນທີ **4** ເອົາ **11** ລົບໃຫ້ ຕົວເສດ ແລ້ວຈະໄດ້ຄ່າຂອງຕົວເລກຫັກຫົວໜ່ວຍ ຊຶ່ງຈະຖືໂຕເລກນັ້ນເປັນ **CHECK DIGIT**

| ຕົວເລກ | **4** | **7** | **3** | **1** | **2** | **4** | **8** | **2** | | |
|---|---|---|---|---|---|---|---|---|---|---|
| ນ້ຳໜັກ | x 8 | x 6 | x 4 | x 2 | x 3 | x 5 | x 9 | x 7 | | |
| ນ້ຳໜັກລວມ | 32 | 42 | 12 | 2 | 6 | 20 | 72 | 14 | | |
| ຜົນລວມ | 32 | + 42 | + 12 | + 2 | + 6 | + 20 | + 72 | + 14 | | = 200 |
| 200 ຫານ 11 = 18 ເຫຼືອ 2 | | | | | | | | | | |
| 11 – 2 = 9 | | | | | | | | | | |
| ປະກອບຕົວເລກ | **4** | **7** | **3** | **1** | **2** | **4** | **8** | **2** | **9** | |

- **ລະຫັດບໍລິສັດ (Company code):**

4 ຕົວອັກສອນທາງທ້າຍ (A12-A14) ໝາຍເຖິງ ລະຫັດ ຂອງຜູ້ປະກອບການ **ເຊັ່ນ** ໄປສະນີລາວ (EPL), ບໍລິສັດ DHL (DHL), ບໍລິສັດກຽງໄກ (KKC)

ຕົວຢ່າງ: **PID = CA473124829EPL**

ໝາຍເຖິງ ເຄື່ອງຝາກດັ່ງກ່າວແມ່ນພັດສະດຸເລກທີ 47312482 ເປັນຂອງບໍລິສັດ ປນລ

### (2). ມາດຕະຖານບາໂຄດ (BarCode) ຂອງເຄື່ອງຝາກ

ການໃຊ້ລະຫັດບາໂຄດແມ່ນການນຳໃຊ້ຕາມມາດຕະຖານສາກົນ ໃຫ້ແກ່ລະຫັດເຄື່ອງຝາກອາດຈະໃຊ້ຕາມສອງມາດຕະຖານ ຂອງອົງການມາດຕະຖານສາກົນຄື: ISO / IEC 15417 (ລະຫັດໂຄດ 128 ສັນຍາລັກ) ຫຼື ມາດຕະຖານ ISO / IEC 16388 (ລະຫັດ 39 ສັນຍາລັກ). ຊຶ່ງກົມໄປສະນີຂໍແນະນຳໃຫ້ໃຊ້ລະຫັດ 128.

**ຕາຕະລາງທີ່ສະແດງເຖິງ ລະຫັດ 128 ແລະ ລະຫັດ 39**

| **ກຳນົດ** | **Code 128** | **Code 39** |
| --- | --- | --- |
| ຕົວອັກສອນ ແລະ ຕົວເລກ<br>Character set | **A–z, 0–9** | |
| ຈຳນວນຕົວອັກສອນ<br>Number of characters | PID 14 ຕົວ (ລວມທັງ 2 ຕົວອັກສອນໜ້າ, 8 ຕົວເລກລຳດັບ, 1 ຕົວເລກກວດສອບ ແລະ 3 ຕົວອັກສອນຫຼັງ) | |
| ການກຳນົດຕົວເລກກວດສອບ<br>Check digit | ເບິ່ງຢູ່ສູດຄຳນວນຂ້າງເທິງຂອງກຸ່ມສາມ | |
| ລະດັບຄວາມກວ້າງຂອງແຕ່ລະເສັ້ນບາໂຄດ (ແກນ X)<br>Narrow element (X) dimension | **0,25 mm – 0,51 mm** | **0,25 -0,43 mm** |
| | ແນະນຳໃຫ້ຢ່າງໜ້ອຍບໍ່ຫຼຸດ 0.33 mm ເນື່ອງຈາກຄວາມກວ້າງຂອງເສັ້ນບາໂຄດ ແກນ X ແມ່ນມີຜົນຕໍ່ຄວາມສາມາດໃນການອ່ານຂອງເຄື່ອງສະແກນ ຊຶ່ງຂໍແນະນຳໃຫ້ໃຊ້ຄວາມສູງທີ່ສູງສຸດຂອງແກນ X ໃນເວລາອອກແບບ | |
| ຄວາມກວ້າງຂອງບາໂຄດ (ແກນ n)<br>Wide/narrow (n) ratio | ບໍ່ໄດ້ກຳນົດ | ສາມາດໃຊ້ໃນສັດສ່ວນລະຫວ່າງ<br>2,5:1 ຫາ 3,0:1 ແຕ່ແນະນຳໃຫ້ນຳໃຊ້ 3,0:1 |
| ໄລຍະຫ່າງລະຫວ່າງເສັ້ນ<br>Intercharacter gap | ບໍ່ໄດ້ກຳນົດ | 1X – 5,3X ຖ້າວ່າ X<0,287 mm;<br>1X – 1,52 mm ຖ້າວ່າ 0,286<X<0,507 mm,<br>1X – 3X ຖ້າວ່າ X>0,506 mm |
| ລະດັບຕ່ຳສຸດຂອງລວງສູງຂອງເສັ້ນບາໂຄດ<br>Minimum bar height | ລະດັບຄວາມສູງຂອງເສັ້ນບາໂຄດບໍ່ເກີນ 15% ຂອງລວງກວ້າງຂອງບາໂຄດ ຊຶ່ງອາດຈະສູງລະຫວ່າງ 9 mm ຫາ 12.5 mm ເພື່ອຄວາມສະດວກໃນການອ່ານແນະນຳໃຫ້ເສັ້ນບາໂຄດຄວນມີຮູບແບບລັກສະນະຈ່ອຍສູງ. | |
| ຂະໜາດນ້ອຍສຸດຂອງເຂດທີ່ບໍ່ມີເສັ້ນບາໂຄດ<br>Minimum quiet zone at ends | ເຂດທີ່ບໍ່ມີເສັ້ນບາໂຄດແມ່ນຢູ່ສ່ວນທ້າຍຂອງລະຫັດບາໂຄດ ຊຶ່ງມີພື້ນທີ່ກວ້າງຢ່າງໜ້ອຍ 10 ເທົ່າຂອງເສັ້ນບາໂຄດ | |

## 2. ການກຳນົດລະຫັດຕົວຊີ້ບອກການຈັດສົ່ງເຄື່ອງຝາກໄປສະນີ (Postal dispatch identifier-PDI)

### (1). ນິຍາມ:

ການຈັດສົ່ງເຄື່ອງຝາກ ໝາຍເຖິງການລວບລວມເຄື່ອງຝາກ ຊຶ່ງອາດຈະບັນຈຸໃສ່ຖົງ ຫຼື ໃສ່ກ່ອງ ທີ່ກະກຽມຈະສົ່ງອອກຈາກຫ້ອງການຈັດສົ່ງເຄື່ອງຕົ້ນທາງໄປຫາຫ້ອງການຮັບເຄື່ອງປາຍທາງ, ຊຶ່ງການຈັດສົ່ງແຕ່ລະຄັ້ງ ຈະຕ້ອງປະກອບມີເອກະສານຂັດຕິດ ຕາມແບບຟອມ ທີ່ກຳນົດໂດຍກົມໄປສະນີ ຊຶ່ງອາດເປັນທັງຮູບແບບເຈ້ຍ ຫຼື ເອເລັກໂຕຣນິກ. ເພື່ອຄວາມສະດວກໃນການຄຸ້ມຄອງຕິດຕາມໃນການຈັດສົ່ງໃນແຕ່ລະຄັ້ງ ຈຶ່ງໄດ້ກຳນົດໃຫ້ມີລະຫັດຂອງ

ການຈັດສົ່ງແຕ່ລະຄັ້ງ ເອີ້ນວ່າ "ລະຫັດຕົວຊີ້ບອກການຈັດສົ່ງເຄື່ອງຝາກໄປສະນີ" (Postal Dispatch Identifier - PDI).

ກົມໄປສະນີກຳນົດ PDI ເພື່ອໃຫ້ຮູ້ວ່າ ຖົງຮວເຄື່ອງນີ້ສົ່ງມາຈາກໃສ, ໄປຫາບ່ອນໃດ, ປະເພດເຄື່ອງຝາກແບບໃດ, ສົ່ງໃນປີໃດ ແລະ ໃນຖົງຮວສົ່ງເລກທີເທົ່າໃດ ຂອງປີ ໂດຍກຳນົດເອົາ 20 ຕົວອັກສອນ ໃນການສະແດງຄວາມໝາຍ ຂອງແຕ່ລະລາຍການໃຫ້ຜູ້ອ່ານສາມາດເຂົ້າໃຈໄດ້ທັນທີ. ຈຸດປະສົງ ເພື່ອນຳໃຊ້ເຂົ້າໃນການແລກປ່ຽນເຄື່ອງຝາກໄປສະນີລະຫວ່າງຜູ້ປະກອບການໄປສະນີດ້ວຍກັນ ຫຼື ລະຫວ່າງຫ້ອງການໄປສະນີສາຂາຂອງຕົນ ຢູ່ ສປປ ລາວ.

### (2). ໂຄງສ້າງຂອງລະຫັດຕົວຊີ້ບອກການຈັດສົ່ງເຄື່ອງຝາກໄປສະນີ

PDI ປະກອບມີ 20 ຕົວອັກສອນ ຊຶ່ງ 15 ຕົວອັກສອນທາງໜ້າ ສະແດງເຖິງ ລະຫັດຂອງການຈັດສົ່ງ (dispatch series, DS), 1 ຕົວອັກສອນຖັດມາ ສະແດງເຖິງ ປີ ໃນປະຕິທິນ ຂອງການຈັດສົ່ງ ແລະ 4 ຕົວເລກທາງທ້າຍ ໝາຍເຖິງ ນໍ້າເບີ ຂອງຖົງຮວຈັດສົ່ງ.

PDI = DS+Y+NNNN
AAAAAA-AAAAAA-AAA-N-NNNN

- **ລະຫັດຂອງການຈັດສົ່ງ (Dispatch Series ຫຼື DS)**

Dispatch Series-DS ປະກອບມີ 15 ຕົວອັກສອນ ຊຶ່ງ 6 ຕົວອັກສອນທຳອິດ ສະແດງເຖິງລະຫັດ ຂອງຫ້ອງການຈັດສົ່ງເຄື່ອງຝາກຕົ້ນທາງ, 6 ຕົວອັກສອນຖັດມາ ສະແດງເຖິງຫ້ອງການຈັດສົ່ງປາຍທາງ ແລະ 3 ຕົວອັກສອນທາງທ້າຍສະແດງເຖິງຮູບແບບຂອງການຈັດສົ່ງ

- 6 ຕົວອັກສອນທຳອິດ (A1 - A6) ແມ່ນກຳນົດເຖິງ ຫ້ອງການຈັດສົ່ງເຄື່ອງຕົ້ນທາງ, ຊຶ່ງ 3 ຕົວອັກສອນທຳອິດແມ່ນກຳນົດລະຫັດຊື່ຫຍໍ້ຂອງບໍລິສັດໄປສະນີຕົ້ນທາງ, ສ່ວນ 3 ຕົວອັກສອນທາງທ້າຍແມ່ນກຳນົດລະຫັດທີ່ຕັ້ງຂອງແຂວງ ຂອງຫ້ອງການຜູ້ປະກອບໄປສະນີຕົ້ນທາງດັ່ງກ່າວ.

  **ຕົວຢ່າງ:** EPLVTE ໝາຍເຖິງຫ້ອງການຝາກເຄື່ອງຕົ້ນທາງຂອງ ບໍລິສັດລັດວິສາຫະກິດໄປສະນີລາວ ທີ່ນະຄອນຫຼວງວຽງຈັນ.

  **EPL -** ລະຫັດຫຍໍ້ຂອງບໍລິສັດລັດວິສາຫະກິດໄປສະນີລາວ
  **VTE -** ລະຫັດຫຍໍ້ຂອງແຂວງນະຄອນຫຼວງວຽງຈັນ

- 6 ຕົວອັກສອນຖັດມາ (A7 – A12) ສະແດງເຖິງ ຫ້ອງການຮັບເຄື່ອງປາຍທາງ, ຊຶ່ງ 3 ຕົວອັກສອນທຳອິດລະຫັດ ຊື່ຫຍໍ້ ຂອງບໍລິສັດໄປສະນີປາຍທາງ, ສ່ວນ 3 ຕົວອັກສອນທາງທ້າຍ ແມ່ນກຳນົດລະຫັດທີ່ຕັ້ງ ຂອງແຂວງ ຂອງຫ້ອງການຜູ້ປະກອບການໄປສະນີປາຍທາງ ດັ່ງກ່າວ.

  **ຕົວຢ່າງ:** DHLLPB ໝາຍເຖິງຫ້ອງການຮັບເຄື່ອງປາຍທາງຂອງບໍລິສັດ DHL ທີ່ແຂວງຫຼວງພະບາງ.

  **DHL** - ລະຫັດຫຍໍ້ຂອງບໍລິສັດ DHL
  **LPB** - ລະຫັດຫຍໍ້ຂອງແຂວງຫຼວງພະບາງ

- 3 ຕົວອັກສອນທາງທ້າຍ (A13 – A15) ແມ່ນລະຫັດຮູບແບບຂອງການຈັດສົ່ງ ປະກອບດ້ວຍ **"ປະເພດຈັດສົ່ງ"** ແລະ **"ປະເພດຂອງເຄື່ອງຝາກ"** (Dispatch Type) ຊຶ່ງ 1 ຕົວອັກ ສອນທຳອິດສະແດງເຖິງ ໝວດຂອງ "ປະເພດຈັດສົ່ງ", ສ່ວນ 2 ຕົວອັກສອນຖັດໄປ ໝາຍເຖິງໝວດ "ປະເພດຂອງເຄື່ອງຝາກ" ຊຶ່ງມີຄື:
  (1). A13 ໝາຍເຖິງໝວດ **"ປະເພດຈັດສົ່ງ"** ຊຶ່ງໄດ້ກຳນົດຢູ່ໃນ ໂລແມັງ 1 ຂໍ້ 7 ວ່າດ້ວຍ ຮູບແບບການຂົນສົ່ງເຄື່ອງຝາກໄປສະນີ.

  **ຕົວຢ່າງ**:

  A - ໝາຍເຖິງການຈັດສົ່ງທາງອາກາດ

  S - ໝາຍເຖິງການຈັດສົ່ງທາງພາກພື້ນ

  (2). A14 - A15 ໝາຍເຖິງໝວດ **"ປະເພດຂອງເຄື່ອງຝາກ"** ຊຶ່ງໄດ້ກຳນົດຢູ່ໃນໂລແມັງ 1 ຂໍ້ 6 ວ່າດ້ວຍດ້ວຍລະຫັດ ຂອງຜະລິດຕະພັນດ້ານໄປສະນີ.

  **ຕົວຢ່າງ:**

  U - ໝາຍເຖິງໄປສະນີພັນ

  C - ໝາຍເຖິງພັດສະດຸໄປສະນີ

- **ການກຳນົດລະຫັດ ຂອງປີ N1**

ການກຳນົດລະຫັດ ຂອງປີ ແມ່ນຈະເອົາພຽງແຕ່ຕົວເລກດຽວ ທີ່ສະແດງຢູ່ຕຳແໜ່ງທີ່ 16 ຂອງໂຄງສ້າງ ໂດຍຈະຖືເອົາເລກທ້າຍ ຂອງປີ ນັ້ນໃນຮອບຂອງທົດສະວັດ (10 ປີ).

**ຕົວຢ່າງ:**

2019 - ແມ່ນເລກ 9

2020 - ແມ່ນເລກ 0

2021 - ແມ່ນເລກ 1

- **ການກຳນົດລະຫັດນ້ຳເບີຂອງຖົງຈັດສົ່ງ (N2-N5)**

ລະຫັດນ້ຳເບີຂອງຖົງຈັດສົ່ງ ປະກອບມີ 4 ຕົວເລກ ຊຶ່ງກຳນົດລະຫັດ ຂອງຖົງຈັດສົ່ງ ຕັ້ງແຕ່ 0000 ຈົນເຖິງ 9999

**ຕົວຢ່າງ PDI = EPLVTE DHLLPB AUN90027**

ໝາຍເຖິງ ຖົງຈັດສົ່ງ PDI ດັ່ງກ່າວແມ່ນຂອງບໍລິສັດ EPL ຢູ່ແຂວງນະຄອນຫຼວງ (VTE) ສົ່ງໄປຫາບໍລິສັດ DHL ຢູ່ແຂວງຫຼວງພະບາງ (LPB) ທາງອາກາດ (A) ໃນປີ 2019 (9) ຊຶ່ງແມ່ນໄປສະນີພັນປະເພດຈົດໝາຍ (UN) ເລກຖົງທີ່ 0027

| ຕຳແໜ່ງ | ຮູບແບບຂໍ້ມູນ | ຄວາມໝາຍ | ຕົວຢ່າງ |
|---|---|---|---|
| 1–6 | A ຈຳນວນ 6 ຕົວ | ລະຫັດ ຫ້ອງການຈັດສົ່ງເຄື່ອງຕົ້ນທາງ | EPLVTE |
| 7–12 | A ຈຳນວນ 6 ຕົວ | ລະຫັດ ຫ້ອງການຮັບຝາກເຄື່ອງປາຍທາງ | DHLLPB |
| 13 | A ຈຳນວນ 1 ຕົວ | ລະຫັດປະເພດການຈັດສົ່ງເຄື່ອງຝາກ | A (ຈັດສົ່ງທາງອາກາດ) |
| 14–15 | A ຈຳນວນ 2 ຕົວ | ລະຫັດ ປະເພດຂອງເຄື່ອງຝາກ | UN<br>- U ໝາຍເຖິງໄປສະນີພັນ |

| | | | |
|---|---|---|---|
| | | | - N ໝາຍເຖິງປະເພດທຳມະດາ |
| 16 | N ຈຳນວນ 1 ຕົວ | ປີຈັດສົ່ງ | 9 ໝາຍເຖິງປີ 2019 |
| 17–20 | N ຈຳນວນ 4 ຕົວ | ຈຳນວນການຈັດສົ່ງ ຈຳນວນຕົວເລກ ສຳລັບການຈັດສົ່ງ ລວມທັງ ເລກ 0 (ຫາກຈຳເປັນ) | 0027 ໝາຍເຖິງຖ້ຽວທີ 27 ຂອງປີ 2019 |

## 3. ການກຳນົດລະຫັດລະບຸພາຫະນະຈັດສົ່ງເຄື່ອງໄປສະນີ (Postal receptacle identifier-PRI)

**(1). ນິຍາມ:**

ການກຳນົດລະຫັດ **"ຕົວຊີ້ບອກພາຫະນະຮັບໃຊ້ໃນການຈັດສົ່ງເຄື່ອງໄປສະນີ"** (Postal receptacle identifier-PRI) ໝາຍເຖິງການກຳນົດຂະບວນການຈັດສົ່ງເຄື່ອງຝາກໄປສະນີ ນັບຕັ້ງແຕ່ຫ້ອງການຈັດສົ່ງ ໄປເຖິງຫ້ອງການແຈກຢາຍ ເພື່ອໃຫ້ຮູ້ວ່າເຄື່ອງຝາກດັ່ງກ່າວ ຈະຈັດສົ່ງແບບໃດ, ດ້ວຍພາຫະ ນະໃດ, ຜ່ານຈັກຂັ້ນຕອນການຂົນສົ່ງ ແລະ ຈະໄປຮອດມື້ໃດ ຊຶ່ງລະຫັດດັ່ງກ່າວສາມາດ ນຳໃຊ້ເພື່ອໃຫ້ ຜູ້ຝາກ ແລະ ຜູ້ຮັບສາມາດຕິດຕາມເຄື່ອງຝາກໄດ້ (track and trace) ແລະ ການແຈ້ງຂໍ້ມູນໃນຮູບແບບເອເລັກໂຕຣນິກ.

"**ລະຫັດລະບຸພາຫະນະຈັດສົ່ງເຄື່ອງໄປສະນີ**" ດັ່ງກ່າວອອກໂດຍຫ້ອງການຈັດສົ່ງເຄື່ອງຝາກໄປສະນີຕົ້ນທາງ ເພື່ອຕິດເຈ້ຍລະຫັດດັ່ງກ່າວໄປກັບເຄື່ອງຝາກ ເພື່ອໃຫ້ຜູ້ຂົນສົ່ງຮູ້ໄດ້ວ່າ ເຄື່ອງດັ່ງກ່າວຈະຖືກສົ່ງໄປໃສ, ຈະຜ່ານການຂົນສົ່ງຈຸດໃດແດ່, ໂດຍສະເພາະ ເວລາມີການປ່ຽນຖ່າຍພາຫະນະການຂົນສົ່ງໃນລະຫວ່າງທາງ.

**ຮູບແບບຂະບວນການຂົນສົ່ງເຄື່ອງຝາກຈາກຕົ້ນທາງຫາປາຍທາງ ທີ່ສະແດງໃຫ້ເຫັນດັ່ງລຸ່ມນີ້:**




"**ລະຫັດລະບຸພາຫະນະຈັດສົ່ງເຄື່ອງໄປສະນີ**" ປະກອບມີ 29 ຕົວອັກສອນ ຊຶ່ງປະກອບດ້ວຍ 2 ພາກສ່ວນໃຫຍ່ຄື:

PRI = PDI+NNNNNNNNN

- **ກຸ່ມທີ 1:**

ໝາຍເຖິງ "**ລະຫັດຕົວຊີ້ບອກການຈັດສົ່ງເຄື່ອງຝາກໄປສະນີ**" (Postal dispatch identifier - PDI) ຊຶ່ງປະກອບມີ ຈຳນວນ 20 ຕົວອັກສອນ ທີ່ກ່າວມາແລ້ວໃນຂໍ້ 1.8.3

- **ກຸ່ມທີ 2:**

ໝາຍເຖິງ ເລກລະຫັດທີ່ຕິດພັນກັບຂະບວນການຈັດສົ່ງ ຊຶ່ງແບ່ງອອກເປັນ 4 ໝວດ ແລະ ປະກອບມີ ຈຳນວນ 9 ຕົວເລກ ຄື:

- 3 ຕົວເລກທຳອິດ (N21 - N23) ໝາຍເຖິງ ຈຳນວນຂັ້ນຕອນ ທີ່ປະກອບໃນຂະບວນການຈັດສິ່ງທີ່ເກີດຂຶ້ນໃນແຕ່ລະຄັ້ງ ຊຶ່ງເລີ່ມຕັ້ງແຕ່ 000 ຈົນເຖິງ 999.

**ຕົວຢ່າງ:**
ໃນການຈັດສິ່ງເຄື່ອງ ແຕ່ນະຄອນຫຼວງວຽງຈັນ ໄປຫາຜົ້ງສາລີ ທີ່ໄດ້ຜ່ານຂະບວນການຈັດສິ່ງ 2 ຄັ້ງຄື: ຄັ້ງທີ 1 ຜ່ານທາງອາກາດ ແຕ່ນະຄອນຫຼວງວຽງຈັນ-ໄປຫາທາງອຸດົມໄຊ ແລະ ຄັ້ງທີ 2 ຜ່ານທາງພາກພື້ນດິນ ແຕ່ອຸດົມໄຊ-ໄປຫາຜົ້ງສາລີ, ສະນັ້ນລະຫັດທີ່ໃສ່ແມ່ນ 002.

- 1 ຕົວເລກຖັດມາ (N24) ແມ່ນສະແດງໃຫ້ເຫັນເຖິງຈຳນວນສູງສຸດ ຂອງຂັ້ນຕອນ ຂອງຂະບວນການຈັດສິ່ງ ຊຶ່ງແບ່ງອອກເປັນ 3 ຄ່າ ຄື:

**ຄ່າເລກ 0 -** ໝາຍເຖິງ ຕົວເລກຈຳນວນຂອງຂະບວນການຈັດສິ່ງ ທີ່ສະແດງຢູ່ໃນລະຫັດຂອງການຈັດສິ່ງໃນຄັ້ງນັ້ນ **"ບໍ່ແມ່ນຈຳນວນສູງສຸດ"** ຂອງຂັ້ນຕອນ ທີ່ມີຢູ່ໃນຂະບວນການຈັດສິ່ງປົກກະຕິ.

**ຕົວຢ່າງ:**
ໃນການຈັດສິ່ງ ແຕ່ນະຄອນຫຼວງວຽງຈັນ-ໄປຫາຜົ້ງສາລີ ປົກກະຕິ ມີ 2 ຂັ້ນຕອນ (ຈາກທາງອາກາດຕໍ່ດ້ວຍທາງພາກພື້ນດິນ), ແຕ່ຄັ້ງນີ້ອາດຈະມີພຽງແຕ່ 1 ຂັ້ນຕອນ (ທາງພາກພື້ນຈາກນະຄອນຫຼວງວຽງຈັນ ເຖິງຜົ້ງສາລີ)

**ຄ່າເລກ 1** - ໝາຍເຖິງ ຕົວເລກຈຳນວນຂອງຂະບວນການຈັດສິ່ງ ທີ່ສະແດງຢູ່ໃນລະຫັດຂອງການຈັດສິ່ງໃນຄັ້ງນັ້ນ **"ແມ່ນຈຳນວນສູງສຸດ"** ຂອງຂັ້ນຕອນ ທີ່ມີຢູ່ໃນຂະບວນການຈັດສິ່ງປົກກະຕິ.

**ຕົວຢ່າງ:**
ໃນການຈັດສິ່ງ ແຕ່ນະຄອນຫຼວງວຽງຈັນ ໄປຫາຜົ້ງສາລີ ປົກກະຕິ ມີ 2 ຂັ້ນຕອນ (ຈາກທາງອາກາດ ຕໍ່ດ້ວຍທາງພາກພື້ນ), ຊຶ່ງຄັ້ງນີ້ ກໍ່ມີ 2 ຂັ້ນຕອນ ຄືກັນກັບປົກກະຕິ.

**ຄ່າເລກ 9** - ໝາຍເຖິງ **"ບໍ່ມີຂໍ້ມູນ"** ກ່ຽວກັບຂະບວນການຂັ້ນຕອນ ຕໍ່ກັບລະຫັດການຈັດສິ່ງເຄື່ອງໃນຄັ້ງນີ້.

- 1 ຕົວເລກຖັດມາ (N25) ແມ່ນສະແດງໃຫ້ເຫັນເຖິງລັກສະນະພິເສດ ຂອງຂະບວນການຈັດສິ່ງ ຊຶ່ງແບ່ງອອກເປັນ 3 ຄ່າ ຄື:

| ຄ່າໂຕເລກ | ຄວາມໝາຍ |
|---|---|
| **0** | ການຈັດສິ່ງທີ່ບໍ່ມີການລົງທະບຽນ ຫຼື ການຄ້ຳປະກັນເຄື່ອງຝາກ |
| **1** | ການຈັດສິ່ງທີ່ມີການລົງທະບຽນ ຫຼື ການຄ້ຳປະກັນເຄື່ອງຝາກ |
| **9** | ບໍ່ມີຂໍ້ມູນ ກ່ຽວກັບລະຫັດການຈັດສິ່ງນີ້ |

- 4 ຕົວເລກທາງທ້າຍ (N26 - N29) ແມ່ນສະແດງເຖິງ **"ຈຳນວນຂອງນ້ຳໜັກສຸດທິ"** (ນ້ຳໜັກ ລວມທັງໝົດ) ຂອງການຈັດສິ່ງເຄື່ອງຝາກໃນຖົງວນັ້ນ ຊຶ່ງຄິດໄລ່ເປັນຫົວໜ່ວຍ ເຮັກໂຕຣກຣາມ ໃນກໍລະນີນ້ຳໜັກ ຫາກເປັນຈຳນວນເສດ ຫຼື ເລກເສດ ເທົ່າ 0.5 ຫຼື ສູງກວ່າ ແມ່ນໃຫ້ຖືວ່າເທົ່າກັບ 1.

(1 Hg = 100 g ຫຼື 1 Kg = 10 Hg).

| ຫົວໜ່ວຍ g | ຫົວໜ່ວຍລະຫັດ Hg | ຫົວໜ່ວຍ Kg | ກາຍ 0.5 ປັດເສດຂຶ້ນ |
|---|---|---|---|
| 1.000 | 0010 | 1 | |
| 740 | 0074 | 7,4 | |
| 860 | 0086 | 8,6 | 9 Kg |

0074 - ໝາຍເຖິງ ນໍ້າໜັກລວມຂອງຈໍານວນຕໍ່າສຸດຢ່າງໜ້ອຍ 7,35 kg ແຕ່ຕໍ່າກວ່າ 7,45 kg
0138 - ໝາຍເຖິງ ນໍ້າໜັກລວມຂອງຈໍານວນຕໍ່າສຸດຢ່າງໜ້ອຍ 13,75 kg ແຕ່ຕໍ່າກວ່າ 13,85 kg
9998 - ໝາຍເຖິງ ນໍ້າໜັກລວມຂອງຈໍານວນຕໍ່າສຸດຢ່າງໜ້ອຍ 999,75 kg ແຕ່ຕໍ່າກວ່າ 999,85 kg
9999 - ໝາຍເຖິງ ນໍ້າໜັກລວມທີ່ມີຈໍານວນຫຼາຍກວ່າ 999,85 kg

**ຕົວຢ່າງ PRI = EPLVTE EPLLPB SCN 9 0185 001 10 0060**

EPLVTE - ຫ້ອງການສົ່ງເຄື່ອງຕົ້ນທາງຂອງ ປນລ ຢູ່ນະຄອນຫຼວງ (EPL - ປນລ, VTE - ວຽງຈັນ)

EPLLPB - ຫ້ອງການຮັບເຄື່ອງປາຍທາງຂອງ ປນລ ຢູ່ຫຼວງພະບາງ (EPL - ປນລ, LPB - ຫຼວງພະບາງ)

SCN - ພັດສະດຸໄປສະນີທີ່ຂົນສົ່ງທາງພາກພື້ນ

9 - ປີ 2019

0185 - ລະຫັດຂອງຖ້ຽວຈັດສົ່ງ

001 - ຈໍານວນຖ້ຽວສູງສຸດ 1 ຖ້ຽວ

10 - ຖ້ຽວຈັດສົ່ງບໍ່ໄດ້ລົງທະບຽນ

0060 - ຂະໜາດນໍ້າໜັກທີ່ຈັດສົ່ງ 60 Hg = 6 Kg

